GCI

# ບົດທີ 4

## ພະຄໍາພີມີລັກສະນະພິເສດສະເພາະ

# ແລະ ວິທີສຶກສາພະຄໍາພີ

**ຄໍານໍາ**:

ວັດຖຸປະສົງຂອງບົດຮຽນ:

- ເພື່ອສຶກສາແນວທາງຫລືເຄື່ອງມືຕ່າງໆ ໃນການສຶກສາພະຄໍາພີ
- ເພື່ອຮຽນຮູ້ວິທີການຕັ້ງຄໍາຖາມໃນການສຶກສາພະຄໍາພີ

## ໂຄງສ້າງບົດຮຽນ

1. ພະຄໍາພີມີລັກສະນະພິເສດກ່ຽວກັບຄວາມຕໍ່ເນື່ອງ
    - ກ. ເວລາໃນການຂຽນຫລາຍກວ່າ 1,500 ປີ
    - ຂ. 66 ເຫລັ້ມ ມີຜູ້ຂຽນຫລາຍກວ່າ 35 ຄົນ
    - ຄ. ພາສາທີ່ໃຊ້ຂຽນ 3 ພາສາ
    - ງ. ມີຄວາມຂັດແຍ້ງກັນແຕ່ຂະນະດຽວກັນສອດຄ່ອງກັນ

2. ລັກສະນະພິເສດທີ່ເປັນວົງຈອນ

3. ລັກສະນະພິເສດໃນການແປເປັນພາສາຕ່າງໆ

4. ລັກສະນະພິເສດຂອງການດໍາລົງມາຍາວນານ
    - ກ. ໄລຍະເວລາ
    - ຂ. ການຕໍ່ຕ້ານ
    - ຄ. ການວິພາກວິຈານ

5. ລັກສະນະພິເສດໃນຄໍາສອນ
    - ກ. ຄໍາທໍານວາຍ ຄໍາພະຍາກອນ
    - ຂ. ປະຫວັດສາດ
    - ຄ. ບຸກຄະລິກລັກສະນະ

6. ສະຫລຸບ

7. ພະຄໍາພີເປັນພະວັດຈະນະທີ່ພະເຈົ້າຊົງດົນໃຈໃຫ້ຂຽນ
    - ກ. ພະວິນຍານບໍລິສຸດເປັນຜູ້ຂຽນພະຄໍາພີ
    - ຂ. ມະນຸດເປັນເຄື່ອງມືທີ່ພະວິນຍານບໍລິສຸດຊົງໃຊ້ຂຽນພະຄຣິສຕະທໍາຄໍາພີ
    - ຄ. ພະຄຣິດຕະທໍາຄໍາພີເປັນພະວັດຈະນະຂອງພະເຈົ້າທີ່ບໍ່ມີຂໍ້ຜິດພາດ

8. ພະຄຣິສຕະທໍາຄໍາພີເປັນໜັງສືທີ່ເຂົ້າໃຈຍາກ

GCI

9. ພະຄຣິສຕະທໍາຄໍາພີມີພະລັງພິເສດ
   ກ. ພະຄຣິສຕະທໍາຄໍາພີມີພະລັງແຍກແຍະເໝືອນເປັນດາບ
   ຂ. ພະຄຣິສຕະທໍາຄໍາພີມີພະລັງສະທ້ອນເໝືອນເປັນແວ່ນແຍງ
   ຄ. ພະຄຣິສຕະທໍາຄໍາພີມີພະລັງຊໍາລະລ້າງເໝືອນນໍ້າ
   ງ. ພະຄຣິສຕະທໍາຄໍາພີມີພະລັງເຮັດໃຫ້ເກີດຜົນເປັນເໝືອນເມັດພັນ
   ຈ, ພະຄຣິສຕະທໍາຄໍາພີມີພະລັງໃຫ້ຈະເລີນເຕີບໃຫຍ່ເໝືອນເປັນອາຫານ
   ສ. ພະຄຣິສຕະທໍາຄໍາພີເປັນພະລັງແຫ່ງພະພອນ ແລະຈະເລີນຮຸ່ງເຮືອງ

10. ພະຄຣິສຕະທໍາຄໍາພີສັ່ງໃຫ້ຜູ້ເຊື່ອສຶກສາພະວັດຈະນະຂອງພະອົງ
   ກ. ໃຜເປັນຜູ້ເວົ້າ: ພະເຈົ້າ: ທູດສະຫວັນ, ມະນຸດ ຫລືຊາຕານ?
   ຂ. ໃຜເປັນຜູ້ທີ່ຖືກເວົ້າດ້ວຍ: ອິດສະລາເອນ, ຄົນນອກສາດສະໜາ, ຜູ້ເຊື່ອ, ມະນຸດ, ຕໍ່ມະນຸດຄົນນຶ່ງເທົ່ານັ້ນ?
   ຄ. ພະວັດຈະນະຂອງພະເຈົ້າຈະສາມາດນໍາມາປະຍຸກໃຊ້ກັບຊີວິດຂອງເຮົາໄດ້ຢ່າງໃດເພື່ອທີ່ຈະເຮັດໃຫ້ເຮົາເປັນຄຣິສຕຽນທີ່ດີຂື້ນໄດ້?

11. ວິທີການສຶກສາພະຄໍາພີ
   ກ. ສໍາຫລວດ " ພະຄໍາພີກ່າວວ່າຢ່າງໃດ?"
   . ແປຄວາມໝາຍ: ມີຄວາມໝາຍວ່າຢ່າງໃດແດ່?
   ຄ. ນໍາມາປະຍຸກໃຊ້: ຈະນໍາມາປະຍຸກໃຊ້ໃນຊີວິດປະຈໍາທຸກວັນນີ້ໄດ້ຢ່າງໃດແດ່?

12. ການໄຕ່ຕອງຕາມຫລັກພະຄໍາພີ
   ກ. ປ່ອຍຕົນເອງໃຫ້ວ່າງເປົ່າ
   ຂ. ສາລະພາບບາບ ແລະປະຖິ້ມຄວາມບາບທັງສິ້ນ
   ຄ. ຄືນດີກັບທຸກຄົນ
   ງ. ເຕັມໄປດ້ວຍພະວິນຍານບໍລິສຸດ
   ຈ. ມາດ້ວຍຄວາມເຊື່ອວ່າພະອົງຊົງເວົ້າກັບທ່ານ
   ສ. ຜູກມັດໃນຄວາມເຊື່ອຟັງ - ຄວາມເປັນພະເຈົ້າ
   ຊ. ເລືອກຂໍ້ຄວາມ
   ຍ. ໃຊ້ຄູ່ມືສຶກສາພະຄໍາພີ
   ດ. ໃຊ້ໜັງສືພະຄໍາພີເຫລັ້ມທີ່ແປງ່າຍຕໍ່ການເຂົ້າໃຈ

13. ການສຶກສາຄຸນລັກສະນະ
   ກ. ກິດຈະການປະຕິບັດ
   ຂ. ຕົວຢ່າງຂອງສະຕີເຟນ

14. ການສຶກສາເລື່ອງສະເພາະ
   ກ. ຄວາມມຸ້ງໝາຍ
   ຂ. ກິດຈະການປະຕິບັດ

15. ຄໍາອຸປະມາ
   ກ. ຄວາມມຸ້ງໝາຍສອງປະການ
   ຂ. ໃນການແປຄວາມໝາຍຂອງຄໍາອຸປະມາ ທ່ານຕ້ອງ
      1. ຄົ້ນພົບວ່າເປັນຫຍັງຈຶ່ງໄດ້ເລົ່າ ແລະບອກອັນໃດ
      2. ເບິ່ງຫາຄວາມໝາຍທີ່ຕັ້ງໃຈໄວ້ໃນຄໍາອຸປະມາ
      3. ມີສ່ວນຮ່ວມສໍາພັນກັບລາຍລະອຽດ

GCI

16. ນິທານປຽບທຽບ
    ກ. ຄວາມມຸ້ງໝາຍສອງປະການ
    ຂ. ໃນການແປຄວາມໝາຍຂອງຄຳອຸປະມາທ່ານຕ້ອງ:

GCI

# 1. ຄວາມເປັນນຶ່ງດຽວໃນການສືບເນື່ອງ

ຄວາມເປັນນຶ່ງດຽວ – ມີນຶ່ງ ແລະພຽງນຶ່ງດຽວ, ດ່ຽວໆ, ອັນດຽວ ຊຶ່ງແຕກຕ່າງຈາກສິ່ງອື່ນໆທັງໝົດ ບໍ່ຄືໃຜ ແລະເທົ່າທຽມກັບໃຜ

ກ. ໄດ້ຮັບການຂຽນຫລາຍກວ່າ 1500 ປີ

ຂ. ປະກອບດ້ວຍໜັງສື 66 ເຫລັ້ມ ແລະໃຊ້ຜູ້ຂຽນຫລາຍກວ່າ 35 ຄົນ

ຊຶ່ງປະກອບດ້ວຍຄົນທຸກຊັ້ນຕັ້ງແຕ່ ກະສັດ, ຊາວບ້ານ, ນັກປັດສະຍາ, ຄົນຫາປາ, ນັກກະວີ, ນັກວິຊາການ

ຄ. ຂຽນຂຶ້ນໃນ 3 ພາສາ

ຄື ເຮັບເຣີ, ອາມາເລັກ ແລະກຣີກ

ງ. ເປັນຂໍ້ໂຕ້ແຍ້ງທີ່ສາມາດເຂົ້າກັນໄດ້ດີ

ໃນເລື່ອງຫລັກໃຫຍ່ກໍຈະມີຂໍ້ໂຕ້ແຍ້ງນັບຮ້ອຍທີ່ສາມາດປະສານເຂົ້າກັນໄດ້ດີ ແລະຕໍ່ເນື່ອງກັນຕັ້ງແຕ່ພະທຳປະຖົມມະການເຖິງພະທຳພະນິມິດຊຶ່ງເປັນເລື່ອງລາວດຽວກັນ ຄືການຊ່ວຍກູ້ຂອງພະເຈົ້າຕໍ່ມະນຸດ

2ເປໂຕ 1:21 ເປັນໜັງສືເຫລັ້ມດຽວຫລືນຶ່ງດຽວ ແລະເປັນໜັງສືທີ່ມະຫັດສະຈັນ ມີນັກຂຽນ 35ຄົນ ທີ່ມີເບື້ອງຫລັງທີ່ຕ່າງໆກັນໃນການຂຽນເລື່ອງລາວມາກມາຍຊຶ່ງຢູ່ໃນຊ່ວງໄລຍະເວລາໄລຍະ 1500ປີ ໃນການປະສານກັນນັ້ນເປັນເລື່ອງທີ່ເປັນໄປບໍ່ໄດ້ຢ່າງແນ່ນອນ ດັ່ງນັ້ນເຮົາຈະອະທິບາຍພະຄຳພີໄດ້ຢ່າງໃດ? ສິ່ງທີ່ຈະສາມາດອະທິບາຍໄດ້ພຽງຢ່າງດຽວກໍຄື " ຄົນຂອງພະເຈົ້າກ່າວຂະນະທີ່ພວກເຂົາໄດ້ຮັບການດົນໃຈຈາກພະວິນຍານບໍລິສຸດ"

*2ເປໂຕ 1:21*
*21 ເພາະວ່າຄຳທຳນວາຍນັ້ນບໍ່ໄດ້ມາຈາກນ້ຳໃຈຂອງມະນຸດຈັກເທື່ອ ແຕ່ມະນຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າ ຕາມທີ່ພຣະວິນຍານບໍລິສຸດຊົງດົນໃຈ.*

## 2. ຄວາມເປັນນຶ່ງດຽວໃນການແຜ່ຫລາຍ

ພະຄຳພີໄດ້ຮັບການອ່ານຈາກຜູ້ຄົນມາກມາຍ ແລະໄດ້ຮັບການຕີພິມໃນພາສາຕ່າງໆຫລາຍກວ່າໜັງສືອື່ນ ມີການຕີພິມທັງເຫລັ້ມ ແລະບາງສ່ວນ ລວມທັງບາງຕອນຫລາຍກວ່າໜັງສືໃດໆໃນປະຫວັດສາດ

## 3. ຄວາມເປັນນຶ່ງດຽວໃນການແປ

ພະຄຳພີໄດ້ຮັບການແປ ແລະແປຊ້ຳ ແລະຖ່າຍຂໍ້ຄວາມຫລາຍກວ່າໜັງສືອື່ນໆທີ່ຍັງມີຢູ່

## 4. ຄວາມເປັນໜຶ່ງດຽວໃນການຄົງຢູ່

ກ. ຜ່ານການເວລາ...

ພະຄຳພີເມື່ອປຽບທຽບກັບການຮຽນໜັງສືໂບຮານເຫລັ້ມອື່ນ ມີພະຍານຫລັກຖານທີ່ຂຽນດ້ວຍມືຫລາຍກວ່າໜັງສືອັນນະກຳຊັ້ນເອກທີ່ເອົາມາລວມກັນສິບຊີ້ນ.

ຂ. ຜ່ານການຂົມເຫັງ...

ພະຄຳພີໄດ້ຖືກຕໍ່ຕ້ານຈາກສັດຕູທີ່ກໍ່ຄວາມຊົ່ວຮ້າຍໃຫ້ຊຶ່ງບໍ່ມີໜັງສືໃດຄື ຄົນຫລວງຫລາຍທີ່ພະຍາຍາມເຜົາທຳລາຍ ປະກາດຫ້າມ ແລະຜິດກົດໝາຍຕັ້ງແຕ່ສະໄຫມຂອງໂຣມັນເຖິງປະຈຸບັນໃນປະເທດຄອມມຸຍນິດ.

ຄ. ຜ່ານການວິພາກວິຈານ

ບໍ່ມີໜັງສືເຫລັ້ມໃດຖືກສັບ ຖືກຜ່າ ຖືກຮ່ອນ ວິນິດພິເຄາະ ແລະຖືກປະນາມ.

GCI

## 5. ຄວາມເປັນນຶ່ງດຽວໃນການສອນ

ກ. ການພະຍາກອນ

ສາສະໜາອິດສະລາມບໍ່ສາມາດຊີ້ໃຫ້ເຫັນເຖິງການພະຍາກອນການມາຂອງໂມຫະມັດທີ່ຄວນກ່າວໄວ້ຫລາຍຮ້ອຍປີກ່ອນທີ່ເຂົາຈະເກີດ ທັງບໍ່ສາມາດລົ້ມສາດສະໜາພິທີທີ່ຖືກຕ້ອງທີ່ພິສູດຂໍ້ຄວາມສະເພາະທີ່ບອກວ່າເຖິງການປາກົດຂອງພວກເຂົາໄດ້

ຂ. ປະຫວັດສາດ

ມັນເປັນເຫລັ້ມດຽວທີ່ຄົງຢູ່ໃນວັນນະກຳປະຫວັດສາດໂດຍປັດສະຈາກໜັງສືໃດທີ່ຈະປຽບເໝືອນໄດ້

ຄ. ຄຸນລັກສະນະ

ພະຄຳພີເປັນໜັງສືທີ່ມີຄຸນລັກສະນະວ່າດ້ວຍເລື່ອງຄວາມບາບຢ່າງກົງໄປກົງມາ ປະຫວັດບຸກຄົນອື່ນໆ ພະຍາຍາມທີ່ຈະປິດບັງ ເບິ່ງຂ້າມຫລືຫລີກລ້ຽງໃນດ້ານມືດຂອງຄົນ ມະນຸດບໍ່ສາມາດຂຽນພະຄຳພີຕາມຄວາມຕ້ອງການຂອງເຂົາໄດ້ ແຕ່ຖ້າເຂົາສາມາດເຮັດໄດ້ ເຂົາກໍຈະບໍ່ເຮັດ

## 6. ການສະຫລຸບ ວິທີສຶກສາພະຄຳພີ

ພະຄຳພີໄດ້ຮັບການພິສູດວ່າເປັນນຶ່ງດຽວ ບໍ່ມີໜັງສືເຫລັ້ມໃດໃນວັນນະກຳທີ່ຈະຄືຄົນກຳລັງຄົ້ນຫາຄວາມຈິງທີ່ອາດຈະນຳມາພິສູດໜັງສືທີ່ຢູ່ເໜືອຄຸນສົມບັດ

ພະຄຳພີເປັນໜັງສືທີ່ຢູ່ເໜືອໜັງສືອື່ນໆທຸກເຫລັ້ມ ເຊັ່ນດຽວກັບຟ້າສະຫວັນທີ່ຢູ່ເໜືອແຜ່ນດິນໂລກ ບາງຄົນອາຈະກ່າວເຖິງພະຄຳພີວ່າ " ອ່ານເພື່ອໃຫ້ສະຫລາດ ເຊື່ອເພື່ອທີ່ຄວາມພົ້ນ ແລະປະຕິບັດເພື່ອເປັນຄົນຊອບທຳ"

GCI

# 7. ພະຄຳພີເປັນພະຄຳທີ່ໄດ້ຮັບການບັນດົນໃຈຈາກພະເຈົ້າ

**2 ຕີໂມທຽວ 3:16-17**

*16 ພຣະທຳຄຳພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປະໂຫຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທຳ.*

ໃນຖ້ອຍຄຳແຫ່ງຄວາມຈິງນີ້ ການປະກາດເປັນຈຸດຢືນຂອງສາດສະໜາຄຣິດໂດຍການ "ດົນບັນດານ" ໝາຍຄວາມວ່າ ພະວິນ ຍານບໍລິສຸດຊົງໃຊ້ອຳນາດອັນບໍ່ຈຳກັດຂອງພະອົງເໜືອຜູ້ຂຽນພະຄຳພີ ການຂຽນໄດ້ຮັບການດົນບັນດານໃຈ ບໍ່ແມ່ນເປັນການບັງຄັບນັກຂຽນ ສຳລັບພະຄຳພີບໍ່ມີບ່ອນໃດທີ່ອ້າງວ່າໄດ້ຮັບການຂຽນໂດຍມະນຸດທີ່ຖືກແນະນຳໃຫ້ຂຽນ

ກ. ພະວິນຍານບໍລິສຸດເປັນຜູ້ຂຽນພະຄຳພີ

2 ເປໂຕ 1:21

ອົງພະເຢຊູໄດ້ຊົງຕັດກັບສາວົກຂອງພະອົງວ່າພະອົງຈະຖິ້ມຫລາຍຢ່າງທີ່ບໍ່ປະກົດ ແລະພະວິນຍານບໍລິສຸດຈະລົງມາ ແລະເລືອກສັນບຸກຄົນບາງຄົນ ແລະສຳແດງພະປະສົງຂອງພະອົງຜ່ານທາງພວກເຮົາຕໍ່ມະນຸດ ແລະພະວິນຍານ ບໍລິສຸດກໍຈະເປັນຄູຂອງຜູ້ເຊື່ອ ໂຢຮັນ 16:12-15

*ໂຢຮັນ 16:13-14*

*13 ແຕ່ເມື່ອພຣະອົງນັ້ນຄືພຣະວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ ພຣະອົງຈະນຳທ່ານທັງຫລາຍໄປສູ່ຄວາມຈິງທັງໝົດ ເພາະພຣະອົງຈະບໍ່ກ່າວແຕ່ລຳພັງຂອງພຣະອົງເອງ ແຕ່ພຣະອົງຊົງໄດ້ຍິນສິ່ງໃດກໍຈະຊົງກ່າວສິ່ງນັ້ນ ແລະຈະຊົງປະກາດໃຫ້ທ່ານທັງຫລາຍຮູ້ເຖິງສິ່ງເຫລົ່ານີ້ທີ່ຈະເກີດຂຶ້ນ.*
*14 ພຣະອົງຈະຊົງໃຫ້ເຮົາໄດ້ຮັບກຽດ ເພາະວ່າພຣະອົງຈະຊົງເອົາສິ່ງທີ່ເປັນຂອງເຮົາມາປະກາດແກ່ທ່ານທັງຫລາຍ.*

ຂ. ມະນຸດເປັນເຄື່ອງມືທີ່ຖືກໃຊ້ໂດຍພະວິນຍານບໍລິສຸດໃນການຂຽນພະຄຳພີ

ຄ. ຜົນ: ພະຄຳຂອງພະເຈົ້າບໍ່ມີການຜິດພາດ

ດັ່ງນັ້ນ ພະຄຳພີປັດສະຈາກການຜິດພາດ ແລະໄວ້ວາງໃຈໄດ້ຢ່າງແນ່ນອນ

ເພັງສັນລະເສີນ 12:6, 119:89 , ເອຊາຢາ 40:8; ມັດທາຍ 5:18;24:35

GCI

## 8. ພະຄໍາພີເປັນໜັງສືທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກ

1 ໂກຣິນໂທ 2:14-16

*14 ແຕ່ມະນຸດທີ່ມີຈິດໃຈທໍາມະດາຈະຮັບສິ່ງເຫລົ່ານັ້ນ ຊຶ່ງເປັນຂອງພຣະວິນຍານແຫ່ງພຣະເຈົ້າກໍບໍ່ໄດ້ ເພາະເຂົາເຫັນວ່າສິ່ງເຫລົ່ານັ້ນເປັນຄວາມໂງ່ ແລະເຂົາບໍ່ສາມາດເຂົ້າໃຈໄດ້ ເພາະວ່າທີ່ຈະເຂົ້າໃຈສິ່ງເຫລົ່ານັ້ນໄດ້ ກໍຕ້ອງອາໄສພຣະວິນຍານ. 15 ແຕ່ຜູ້ທີ່ຢູ່ຝ່າຍພຣະວິນຍານກໍສັງເກດຮູ້ສິ່ງສາລະພັດໄດ້ ແຕ່ບໍ່ມີໃຜສັງເກດຮູ້ໃຈຜູ້ນັ້ນໄດ້. 16 "ດ້ວຍວ່າຜູ້ໃດໜໍ ໄດ້ຮູ້ຈັກພຣະໄທຂອງອົງພຣະຜູ້ເປັນເຈົ້າ ຈຶ່ງຈະສັ່ງສອນພຣະອົງໄດ້" ແຕ່ຝ່າຍເຮົາທັງຫລາຍກໍມີພຣະໄທຂອງພຣະຄຣິດ.*

ເພາະວ່າມັນເປັນໜັງສືທີ່ມາຈາກສິ່ງທີ່ນັບບໍ່ຖ້ວນໄປເຖິງສິ່ງທີ່ແນ່ນອນມີຂີດຈໍາກັດຈາກພະເຈົ້າຜູ້ຊົງລິດທານຸພາບບໍ່ຈໍາ ກັດເຖິງມະນຸດທີ່ມີຂີດຈໍາກັດ ດັ່ງນັ້ນທ່ານບໍ່ສາມາດເຂົ້າໃຈພະຄໍາພີໄດ້ດັ່ງທີ່ຈະເຂົ້າໃຈໃນການຂຽນໜັງສືຂອງນັກວິ ຊາການທີ່ຍິ່ງໃຫຍ່ໄດ້ທ່ານສາມາດຮຽນຮູ້ປັດສະຍາທີ່ຍິ່ງໃຫຍ່ດ້ວຍສະຕິປັນຍາຕາມທໍາມະຊາດ ແລະໂດຍສະຕິປັນຍາ ທີ່ສະຫລາດໃນການເຂົ້າໃຈຄວາມໝາຍທີ່ເລິກຊຶ້ງ ຖ້າພະຄໍາພີສາມາດເຮັດໃຫ້ເຂົ້າໄດ້ໂດຍສະຕິປັນຍາ ຕາມທໍາມະຊາດ ແລ້ວມັນກໍຈະເປັນໜັງສືທໍາມະດາເຫລັ້ມນຶ່ງ ແລະເປັນເລື່ອງຂອງຈິດວິນຍານ ກ່ອນທີ່ທ່ານຈະຮັບການສອນ ທ່ານຕ້ອງ ເກີດໃນຝ່າຍວິນຍານເສັຽກ່ອນ (ໂຢຮັນ 3:6) ເລີ້ມຕົ້ນພະຄໍາພີດ້ວຍການອະທິຖານໃຫ້ພະວິນຍານບໍລິສຸດເປັນຄູຂອງທ່ານ ແລະຈະນໍາທ່ານໃຫ້ເຂົ້າໃຈໃນພະຄໍາຂອງພະເຈົ້າດີຍິ່ງຂຶ້ນ ຫລືມັນອາດຈະຍາກຢູ່ກໍຈົ່ງປິດໜັງສືເສັຽ (ໂຢຮັນ 16:12-15)

## 9. ພະຄໍາພີມີອໍານາດພິເສດ

ກ. ພະຄໍາພີມີອໍານາດແບ່ງແຍກເໝືອນດາບ

ມັນຈະແຍກມະນຸດຈາກຄວາມບາບ ຫລືຄວາມຕັ້ງໃຈໃນການເຮັດບາບ ແຍກມະນຸດຈາກພະຄໍາພີ

ເພັງສັນລະເສີນ 119:9-11
ເອຊາຢາ 59:2

ຂ. ພະຄໍາພີມີອໍານາດສະທ້ອນເໝືອນແວ່ນ

ໃນພະຄໍາພີ ເຮົາຈະເຫັນຕົວເອງເຊັ່ນດຽວກັບທີ່ພະເຈົ້າຊົງເບິ່ງເຫັນເຮົາ - ຄືເປັນຄົນບາບ

ໂຣມ 3:23; 7:7; ຄາລາເຕັຽ 3:22

ຄ. ພະຄໍາພີມີອໍານາດໃນການຊໍາລະເຊັ່ນນໍ້າ

ດາວິດໄດ້ອະທິຖານວ່າພະເຈົ້າຊົງ "ຊໍາລະທ່ານຈາກຄວາມຊົ່ວຊ້າ" ແລະ " ໃຫ້ທ່ານສະອາດຈາກຄວາມບາບ"

ເອເຟໂຊ 5:26 ເພັງສັນລະເສີນ 51:2

GCI

ງ. ພະຄຳພີມີອຳນາດກໍ່ຮ່າງຂຶ້ນໃຫມ່ເຊັ່ນເມັດພືດ

1 ເປໂຕ 1:23

ເຮົາເປັນລູກຂອງພະເຈົ້າເພາະເຮົາໄດ້ບັງເກີດໃຫມ່ໃນຄອບຄົວຂອງພະເຈົ້າໂດຍເມັດຊຶ່ງບໍ່ເນົ່າເປື່ອຍຂອງພະເຈົ້າ

ຈ. ພະຄຳພີມີອຳນາດໃນການບຳລຸງລ້ຽງເຊັ່ນອາຫານ

1 ເປໂຕ 2:2

ພະຄຳພີເປັນອາຫານຝ່າຍຈິດວິນຍານສຳລັບຈິດໃຈ ບໍ່ມີຄຣິສຕຽນຄົນໃດທີ່ສາມາດເຂັ້ມແຂງໄດ້ໃນພະເຈົ້າ ແລະບໍ່ ຮຽນຮູ້ພະຄຳຂອງພະເຈົ້າ

ຊ. ພະຄຳພີມີອຳນາດໃນການໃຫ້ພະພອນ ແລະລົ້ນເຫລືອ

ພະຄຳພີມີອຳນາດໃນການໃຫ້ພະພອນ ແລະລົ້ນເຫລືອຕໍ່ຊີວິດຂອງຜູ້ຮຽນຮູ້ ແລະເຊື່ອຟັງ

ໂຢຊວຍ 1:8
ເພັງສັນລະເສີນ 1:1-3

GCI

# 10. ພະຄຳພີບັນຊາໃຫ້ຜູ້ເຊື່ອໃຫ້ຮຽນພະວັດຈະນະ

2 ຕີໂມທຽວ 2:15

*15 ຈົ່ງອົດສາພະຍາຍາມສະແດງຕົນເໝືອນເປັນຄົນທີ່ພິສູດແລ້ວຕໍ່ພຣະພັກພຣະເຈົ້າ, ເປັນຄົນງານທີ່ບໍ່ຕ້ອງອາຍແລະໃຊ້ພຣະທຳແຫ່ງຄວາມຈິງຢ່າງຖືກຕ້ອງ.*

ເມື່ອທ່ານຮຽນພະຄຳພີທ່ານຈະພົບວ່າມັນເປັນພະຄຳຂອງພະເຈົ້າ ທ່ານຕ້ອງລະລຶກຢູ່ໄວ້ໃນໃຈວ່າພະຄຳຂອງພະເຈົ້າປະກອບດ້ວຍ "ຖ້ອຍຄຳ" ຂອງຜູ້ອື່ນນຳ ເມື່ອທ່ານສຶກສາພະຄຳພີ ຈົ່ງຖາມຄຳຖາມແກ່ຕົນເອງວ່າ

ກ. ໃຜກຳລັງເວົ້າ : ພະເຈົ້າ, ທູດສະຫວັນ , ມະນຸດ ຫລື ຊາຕານ?

ຂ. ໃຜຖືກເວົ້ານຳ : ອິດສະລາເອນ, ຄົນນອກສາດສະໜາ, ຜູ້ເຊື່ອ, ມະນຸດຊາດ, ຫລືມະນຸດ?

ຄ. ຈະນຳພະວັດຈະນະປະຍຸກໃຊ້ໃນຊີວິດປະຈຳວັນຂອງຂ້ອຍໄດ້ຢ່າງໃດເພື່ອໃຫ້ຂ້ອຍໄດ້ເປັນຄຣິສຕຽນທີ່ດີຂຶ້ນ?

ເມື່ອທ່ານສຶກສາພະຄຳພີ ທ່ານຈະຮັກພະວັດຈະນະຂອງພະເຈົ້າ

1. ດາວິດ

| | | | |
|---|---|---|---|
| ກ. | ເພງສັນລະເສີນ 119:11 | - | ຂ້າພະອົງໄດ້ສະສົມພະດຳລັດຂອງພະອົງໄວ້ໃນໃຈຂອງຂ້າພະອົງເພື່ອຂ້າພະອົງຈະບໍ່ເຮັດບາບຕໍ່ພະອົງ |
| ຂ. | 119:97-104 | - | ຂ້າພະອົງຮັກພະທຳຂອງພະອົງແທ້ໆ ເປັນຄຳພາວະນາຂອງຂ້າພະອົງທັງເຊົ້າຄໍ່າ |
| ຄ. | 119:127 | - | ເພາະສະນັ້ນ ຂ້າພະອົງຮັກພະບັນຍັດຂອງພະອົງຍິ່ງ ກວ່າທອງຄຳຍິ່ງກວ່າຄຳນົບພະຄຸນ |
| ງ. | 119:140 | - | ພະດຳລັດຂອງພະອົງນັ້ນທົດລອງດີແລ້ວ ແລະຜູ້ຮັບໃຊ້ຂອງພະອົງຮັກພະດຳລັດນັ້ນ |
| ຈ. | 19:7-11 | - | ກົດໝາຍຂອງພະເຈົ້າຮອບຄອບ ແລະຟື້ນຟູຈິດ ວິນຍານກົດເກນ ຂອງພະເຈົ້ານັ້ນແນ່ນອນ ເຮັດໃຫ້ຄົນຮູ້ນ້ອຍມີປັນຍາ |

GCI

2. ໂຢບ

ກ. ໂຢບ 23:12 - ຂ້າພະອົງບໍ່ໄດ້ພາກໄປຈາກພະບັນຍັດແຫ່ງຣິມພະໂອດຂອງພະອົງ ຂ້າພະອົງສຶກສາພະວັດຈະນະແຫ່ງພະໂອດຂອງພະອົງສູງກວ່າ ເຈດຕະນາຂອງຂ້າພະອົງ

ຂ. ເຢເລມີ 15:16 - ເມື່ອພົບພະວັດຈະນະຂອງພະອົງແລ້ວຂ້າພະອົງກໍກິນເສັຽ ພະວັດຈະນະຂອງພະອົງເປັນຄວາມຊື່ນບານແກ່ຂ້າພະອົງ ແລະເປັນຄວາມປີຕິຍິນດີແຫ່ງຈິດໃຈຂອງຂ້າພະອົງ

## 11. ສຶກສາພະຄຳພີຢ່າງໃດ

ກ. ສຳຫລວດ - ພະຄຳພີກ່າວວ່າຢ່າງໃດແດ່?

1. ເລີ້ມຕົ້ນດ້ວຍຄຳອະທິຖານ

2. ອ່ານ ແລະອ່ານຊ້ຳ - ເໝືອນກັບອ່ານຈົດໝາຍຮັກ

3. ຄົ້ນຫາຈຸດປະສົງຂອງຜູ້ຂຽນ ເຊັ່ນ ໂຢນາ 20:30-31

ກ. ຄວບຄຸມ**ເລື່ອງ**ຫຍັງ

ຂ. **ບັນຫາ**ທີ່ກ່ຽວຂ້ອງ

ຄ. ການໃຫ້**ຄຳແນະນຳ**

ງ. ຄຳຫລັກ ແລະກະວິທີ່**ກ່າວຊ້ຳ**

4. ຖາມ**ຄຳຖາມ**

ກ. **ໃຜ** ໃຜຂຽນ? ກ່າວຢ່າງໃດ? ເຖິງໃຜ? ກ່ຽວກັບໃຜ?

ຂ. **ອັນໃດ** ເຫດການຫລັກຄືອັນໃດ? ຫລັກຄຳສອນຫລັກ? ຈຸດປະສົງ? ເຂົາເວົ້າກ່ຽວກັບອັນໃດ?

ຄ. **ເມື່ອໃດ**ເກີດຂື້ນເມື່ອໃດ? ຈະເກີດຂື້ນອີກບໍ່ ເມື່ອໃດ?

ງ. **ບ່ອນໃດ** ເກີດຂື້ນບ່ອນໃດ? ຈະເກີດຂື້ນບ່ອນໃດ?

ຈ. **ເປັນຫຍັງ** ເປັນຫຍັງຈຶ່ງຂຽນ? ເປັນຫຍັງຈຶ່ງເກີດຂື້ນ?

ສ. **ຢ່າງໃດ** ເກີດຂື້ນໄດ້ຢ່າງໃດ? ເຂົາເຮັດຢ່າງໃດ?

GCI

5. ຄົ້ນຫາ ແລະບັນທຶກກ່ຽວກັບພະເຈົ້າໃນເລື່ອງ

   ກ. **ພະລັກສະນະ** ເຮົາຈະຮຽນອັນໃດກ່ຽວກັບພະເຈົ້າແດ່

   ຂ. **ຫລັກຄຳສອນ**

   ຄ. **ພະສັນຍາ**

   ງ. **ຄຳສັ່ງ**

   ຈ. **ຄຳເຕືອນ**

   ສ. **ກົດລະບຽບ** ເຊັ່ນ ການຫອ່ານ ແລະເກັບກ່ຽວ

   ຊ. **ເຫດຜົນ** ໃນການຮັກພະເຈົ້າ

6. ເຮັດເຄື່ອງໝາຍໃນພະຄຳພີ - ໃຊ້ສີເນັ້ນ

   ກ. **ສີທອງ** ພະສັນຍາຂອງພະເຈົ້າ

   ຂ. **ສີຂຽວ** ພະວິນຍານບໍລິສຸດ

   ຄ. **ສີມ້ວງ** ອານາຈັກຂອງພະເຈົ້າ

   ງ. **ສີເຫລືອງ** ຂໍ້ຄວາມທີ່ສຳຄັນ

   ຈ. **ສີຟ້າ** ຄວາມເປັນພະເຈົ້າຂອງອົງພະຄຣິດ

   ສ. **ສີແດງ** ພະໂລຫິດ

   ຊ. ສໍ ຂຽນບ່ອນຊ່ອງວ່າງ, ວົງກົມປະໂຫຍກຫລັກ, ໃຊ້ເຊື່ອມໂຍງຂໍ້ທີ່ອ້າງອີງ

7. ກຳນົດຫົວຂໍ້ທີ່ດີທີ່ສຸດ ຫລືຊື່ເລື່ອງສຳລບແຕ່ລະບົດ

   ເລືອກຂໍ້ທີ່ເປັນຫົວຂໍ້ຫລັກ

8. ກຳນົດຫົວຂໍ້ຂອງຊື່ເລື່ອງສຳລັບໜັງສືທັງເຫລັ້ມ

GCI

ຂ. **ການຕີຄວາມໝາຍ** - ໝາຍຄວາມວ່າຢ່າງໃດ?

1. **ຄວາມເຂົ້າໃຈເລິກຊຶ້ງ**

ກ. ພະວັດຈະນະບໍ່ເປັນຂໍ້ຄວາມທີ່ຂັດແຍ້ງກັນ
ໃຫ້ພະຄຳເປັນຕົວອະທິບາຍໃນຕົວເອງ
ຢ່ານຳຂໍ້ຄວາມຕີຄວາມເກີນເລີຍຈາກເນື້ອເລື່ອງ

ຂ. ຕີຄວາມໝາຍຕາມຕົວອັກສອນສະເໝີ
ຢ່າປ່ຽນຄວາມໝາຍ

ຄ. ມີເລື່ອງກ່ຽວກັບວັດທະນາທຳ, ທຳນຽມ, ສັງຄົມ ຫລືສາດສະໜາ ມາພິຈາລະນານຳ ຫລືບໍ່?

2. **ວິທີການ**

ກ. ຖາມ**ຄຳຖາມ** ເປັນຫຍັງ? ມີຄວາມໝາຍວ່າຢ່າງໃດ?

ຂ. **ມີຄຳ**ທີ່ໜ້າສົນໃຈ ຫລືຈຳເປັນຫລືບໍ່?

ຄ. ກຳນົດວ່າອັນໃດມີຄວາມໝາຍຕໍ່ຜູ້ອ່ານທົ່ວໆໄປ ໃນເນື້ອເລື່ອງທາງປະຫວັດສາດ

ງ. ກວດສອບຂໍ້ຄວາມອື່ນໆ ທີ່ໃຫ້ການສະໜັບສະໜູນ, ຂະຫຍາຍ ຫລືໃຫ້ຄວາມເຂົ້າໃຈ

ຈ. ອ່ານການ**ຕີຄວາມໝາຍ**ຈາກບ່ອນອື່ນ ຖ້າມີ

ສ. ໃຊ້**ຄູ່ມືອະທິບາຍພະຄຳພີ** ຖ້າທ່ານມີ

ຊ. **ສະຫລຸບ**ຂໍ້ຄວາມຂອງທ່ານ

ຄ. **ການນຳມາປະຍຸກໃຊ້** - ຈະນຳມາປະຍຸກໃຊ້ໃນຊີວິດປະຈຳວັນໄດ້ຢ່າງໃດ

ຢາໂກໂບ 1:22
*22 ແຕ່ທ່ານທັງຫລາຍຈົ່ງກາຍເປັນຜູ້ຂັບຕາມພຣະໄທນັ້ນ ບໍ່ແມ່ນເປັນແຕ່ພຽງຜູ້ໄດ້ຍິນເທົ່ານັ້ນ ຊຶ່ງເປັນການລໍ້ລວງຕົນເອງ.*

1. 2ຕີໂມທຽວ 3:16-17

| | | | |
|---|---|---|---|
| ກ. | ການສອນ | - | ເປັນສາວົກ, ເປັນຜູ້ຮຽນ |
| ຂ. | ໃນການເຕືອນ | - | ເປີດເຜີຍຫລືເວົ້າແຈ້ງໆ ໃນສິ່ງທີ່ຜິດໃນຄວາມຄິດ ແລະການປະພຶດຂອງເຮົາ |
| ຄ. | ແກ້ໄຂ | - | ຍອມຮັບຜິດ ແລະຫັນກັບຈາກທາງທີ່ບໍ່ຖືກຕ້ອງ<br>ມັດທາຍ 5:23-24; 18:15 |
| ງ. | ຝຶກອົບຮົມໃນທາງທຳ | - | ຈະດຳເນີນຊີວິດຢ່າງໃດ<br>1ກຣທ 10:11<br>ໂຣມ 15:4 |

GCI

2. ມັນເປັນສິ່ງທີ່:

   ກ. ຕ້ອງຫລີກລ້ຽງ**ຄວາມບາບ** ຫລືຄວາມບໍ່ຖືກຕ້ອງ

   ຂ. **ສັ່ງ**ໃຫ້ເຊື່ອຟັງ

   ຄ. **ພະສັນຍາ**ຕໍ່ເຮົາ

   ງ. **ເປັນຕົວຢ່າງ**ທີ່ຄວນຮຽນຮູ້

3. ອ່ານພະຄຳພີໝົດເຫລັ້ມຕະຫລອດປີ

   ກ. ອ່ານມື້ລະ 3 ບົດ

   ຂ. ໃນວັນອາທິດ ກໍອ່ານ 5 ບົດ

## 12. ການໄຕ່ຄອນຕາມຫລັກພະຄຳພີ

ໂຢຊວຍ 1:8
ເພັງສັນລະເສີນ 1

ການສຶກສາພະຄຳພີ : ພະວັດຈະນະ ເພື່ອຄວາມຮູ້ ເປົ້າໝາຍແລກຄືເຂົ້າໃຈໃນຂໍ້ຄວາມ ແລະວິເຄາະປຽບທຽບ ກັບຂໍ້ຄວາມອື່ນໆ ຂໍ້ຕໍ່ຂໍ້ ເຫລັ້ມຕໍ່ເຫລັ້ມ ໃຊ້ ສັບພານຸກົມ ພະຄຳພີ ແລະຄູ່ມືອື່ນໆ

ການໄຕ່ຄອນຕາມຫລັກພະຄຳພີ: ເປັນເໝືອນເດັກໆທີ່ຖາມພະເຈົ້າໃຫ້ລ້ຽງດູຈິດວິນຍານຂອງທ່ານ ແລະນຳໃນທາງຂອງທ່ານອ່ານ ແລະລໍຄອຍພະເຈົ້າເວົ້າກັບທ່ານ ເປີດໃຈກັບພະຄຳພະອົງຈະຊົງໜູນໃຈທ່ານ, ນຳທາງ ແລະຕຳນິທ່ານ ຖ້າຈຳເປັນທ່ານຈະໄດ້ພົບກັບພະເຈົ້າ ແລະຟັງຈາກພະອົງໃນແຕ່ລະວັນທ່ານຈະເຊື່ອຟັງ ແລະນຳມາປະຍຸກໃຊ້.

ຕັ້ງໃຈໃຫ້ ເວລາພິເສດແກ່ອົງພະເຢຊູໃນແຕ່ລະເຊົ້າກ່ອນທີ່ຈະເລີ້ມເຮັດກິດຈະກຳອື່ນ ເພັງສັນລະເສີນ 119:147

*ກ. ປ່ອຍຕົນເອງໃຫ້ວ່າງ*

   1. ປ່ອຍຄວາມຄິດ

   2. ຢ່າໃຫ້ຄວາມຄິດເດີມມາເປັນຕົວກັ້ນທີ່ຈະຮັບສິ່ງໃຫມ່ໆ

   3. ຢ່ານຶກວ່າທ່ານຕ້ອງການທີ່ຈະໄດ້ຍິນອັນໃດ

*ຂ. ສາລະພາບບາບ ແລະປະຖິ້ມຄວາມບາບທັງສິ້ນ*

   ເພັງສັນລະເສີນ 139:23–24

GCI

ຄ. *ຄືນດີກັບທຸກຄົນ*

ມັດທາຍ 5:23-24

ງ. *ເຕັມໄປດ້ວຍພະວິນຍານບໍລິສຸດ*

ເອເຟໂຊ 5:18

ພະອົງເປັນຜູ້ແຕ່ງ - ເປັນພະອາຈານ ໂຢຮັນ 14:26

ຈ. *ມາດ້ວຍຄວາມເຊື່ອວ່າພະອົງຊົງເວົ້າກັບທ່ານ*

"ພະບິດາຂອງເຮົາ"

ເຮັບເຣີ 12:25
ເອຢາຊາ 50:4;51:1,4,7, 55:2-3
ຮາບາກຸກ 2:1

ສ. *ຜູກມັດໃນຄວາມເຊື່ອຟັງ - ຄວາມເປັນພະເຈົ້າ*
ລູກາ 6:46 ມັດທາຍ 7:21

ຊ. *ເລືອກຂໍ້ຄວາມ*

1. ຂໍແນະນຳໃຫ້ທ່ານຈົດລົງປຶ້ມບັນທຶກ ແລະໄລ່ຄວນຕັ້ງແຕ່ເລີ້ມຕົ້ນຈົນຈົບ

2. ດຳເນີນຢ່າງເປັນລະບົບໃນແຕ່ລະວັນ ເປັນສິ່ງທີ່ສຳຄັນຫລາຍ

3. ຂໍພະວິນຍານບໍລິສຸດຊົງນຳໃນການເລີ້ມຕົ້ນຖ້າພະອົງຊົງນຳທ່ານໃຫ້ອ່ານຂໍ້ອື່ນເພື່ອບົດຮຽນພິເສດ ຫລື ການຂະຫຍາຍຄວາມກໍຈົ່ງເຮັດ ແລະກັບມາຍັງຂໍ້ຄວາມຂອງທ່ານຕໍ່

ຍ. *ໃຊ້ຄູ່ມືສຶກສາພະຄຳພີ*

1. ໜັງສືເຝົ້າດ່ຽວເປັນໜັງສືທີ່ດີແຕ່ບໍ່ຄວນໃຊ້ສຳລັບການພາວະນາໃນຕອນເຊົ້າ

2. ຮຽນຮູ້ໃນການຟັງສຽງຂອງພະເຈົ້າສຳລັບສິ່ງທີ່ພິເສດ ແລະສຳລັບທ່ານໂດຍສະເພາະ

3. ຫລີກລ້ຽງການໃຊ້ໜັງສືອະທິບາຍພະຄຳພີດ້ວຍເຫດຜົນຢ່າງດຽວກັນໃຫ້ພະອົງຊົງປະທານ ຄຳອະທິບາຍແກ່ທ່ານເປັນການສ່ວນຕົວ ມັນອາດຈະບໍ່ຄ່ອຍເປັນເລື່ອງຂອງຄວາມຮູ້ແຕ່ມັນກໍເປັນຂໍ້ຄວາມສຳລັບທ່ານໂດຍສະເພາະ

ດ. *ໃຊ້ໜັງສືພະຄຳພີເຫລັ້ມທີ່ແປງ່າຍຕໍ່ການເຂົ້າໃຈ*

GCI

## 13. ການສຶກສາຄຸນລັກສະນະ

ພະຄຳພີປະກອບດ້ວຍການດຳເນີນຊີວິດຂອງບຸກຄົນທີ່ມີຕົວຕົນຢູ່ແທ້ເພື່ອທີ່ເຮົາຈະໄດ້ຮຽນຮູ້ຈາກພວກເຂົາ ໃຫ້ຕະໜັກ ວ່າຄວາມຫລົ້ມເຫລວບໍ່ແມ່ນເປັນສິ່ງສຸດທ້າຍ ແລະແມ່ນກະທັ້ງຄົນທີ່ເຂັ້ມແຂງກໍມີຄວາມອ່ອນແອເຊັ່ນກັນ

ກ. ກິດຈະການປະຕິບັດ

1. ລອງເລືອກຊີວິດຂອງບຸກຄົນທີ່ໜ້າສົນໃຈເປັນພິເສດທີ່ທ່ານຢາກຈະສຶກສາ

2. ບັນທຶກເຖິງຂໍ້ທີ່ສຳຄັນຫລືປະໂຫຍດທີ່ສຳຄັນ ໃຊ້ໜັງສືສັບພານຸກົມຖ້າຈຳເປັນ

3. ອ່ານຂໍ້ຄວາມ ແລະເຮັດບັນທຶກໃນປະເດັນທີ່ສຳຄັນ

4. ຄົ້ນຫາ:

   ກ. ຄວາມໝາຍຂອງຊື່ (ເຊັ່ນໂມເຊແປວ່າ ດຶງຂຶ້ນມາຈາກນ້ຳ)

   ຂ. ປະຫວັດຄອບຄົວ

   ຄ. ການຝຶກອົບຮົມແລະການກັບໃຈ

   ງ. ເວລາໃນຊ່ວງທີ່ເຂົາມີຊີວິດ ແລະຊ່ວງເວລາແຫ່ງຊີວິດຂອງເຂົາ

   ຈ. ຄວາມຫລົ້ມເຫລວ ແລະຄວາມສຳເລັດ

   ສ. ຊີວິດຝ່າຍຈິດວິນຍານ

   ຊ. ຂໍ້ພະຄຳພີທີ່ເປັນຕົວຢ່າງເຖິງລະບຽບໃນດ້ານຈິດວິນຍານ

   ຍ. ຜົນກະທົບໃນຊີວິດຂອງເຂົາຕໍ່ຜູ້ອື່ນ

   ດ. ຄວາມຕາຍຂອງເຂົາ

ຂ. ຕົວຢ່າງຂອງສະເຕີເຟນ

1. ຮ່າງຂໍ້ຄວາມ ແລະປະໂຫຍກຈາກພະຄຳພີ ກຈກ 6:3-82; 11:19,22-20

2. ຫາຄວາມໝາຍຂອງຊື່ – ມົງກຸດ, ຫລືພວງມາໄລແຫ່ງໄຊຊະນະ

GCI

## 14. ການສຶກສາເລື່ອງສະເພາະ

ກ. ຄວາມມຸ້ງໝາຍ

1. ເພື່ອກຳນົດວ່າອັນໃດທີ່ເປັນພຣະຄຳຂອງພຣະເຈົ້າ ທີ່ກ່າວໃນຫົວຂໍ້ພິເສດຊຶ່ງຈະໃຫ້ພາບລວມທັງໝົດໃນເລື່ອງລາວນັ້ນ

ຂ. ວິທີການປະຕິບັດ

1. ລອງເບິ່ງຂໍ້ຄວາມທີ່ມີຄວາມສຳພັນກັນ ແລະປຽບທຽບກັນໃນເລື່ອງທີ່ທ່ານກຳລັງສຶກສາຕ້ອງເຂົ້າໃຈໃນຂໍ້ອ້າງອີງແຕ່ລະຂໍ້ ແລະວິເຄາະຕາມເນື້ອເລື່ອງ

   ກ. ໃຊ້ຄຳສັບພານຸກົມພຣະຄຳພີ ແລະອື່ນໆ

   ຂ. ຄົ້ນເບິ່ງຄຳທີ່ສຳພັນກັນ ເຊັ່ນ: ການອະທິຖານ/ ການອະທິຖານວິງວອນ

   ຄ. ຫາຂໍ້ຄວາມທີ່ຫົວເລື່ອງໄດ້ເອີ່ຍໄວ້ໃນຕອນຕົ້ນຈາກພຣະຄຳພີ ສຶກສາທັງໝົດ

   ງ. ຄົ້ນເບິ່ງຂໍ້ຄວາມທີ່ຂັດແຍ້ງກັນ

2. ຮວບຮວມຂໍ້ມູນຂອງທ່ານ

   ກ. ສຶກສາໃນແຕ່ລະຂໍ້ຄວາມທັງໝົດ ພິຈາລະນາໃຫ້ແນ່ໃຈເຖິງຄວາມໝາຍທີ່ຜູ້ແຕ່ງຕັ້ງໃຈໄວ້

   ຂ. ກວດສອບເນື້ອເລື່ອງຢ່າງລະມັດລະວັງ

   ຄ. ກຳນົດຄຳສອນຫລັກທີ່ເປັນຈິງໃນຂໍ້ຄວາມ

   ງ. ບັນທຶກການຄົ້ນຄ້ວາຂອງທ່ານ ແລະແນວຄິດໃຫມ່ໆ

   ຈ. ຈົດຂໍ້ຄວາມທີ່ຊັດເຈນ ແລະບໍ່ຊັດເຈນຢ່າສ້າງຫລັກຄຳສອນທີ່ຄຸມເຄືອ

   ສ. ຈົດການສອນທີ່ພິເສດທີ່ກ່າວຊ້ຳໆ ແລະໃຫ້ຄວາມສົນໃຈເປັນພິເສດ

   ຊ. ຢ່າລືງຄວາມເຫັນ, ທຳນຽມ ຫລືທີ່ມາຂອງຫລັກສາດສະໜາສາດພິເສດ

3. ຮວບຮວມເນື້ອຫາສາລະເປັນໂຄງເລື່ອງ

   ກ. ແນ່ໃຈວ່າຫົວເລື່ອງສົມບູນ ແລະເປັນເລື່ອງເປັນລາວຕໍ່ເນື່ອງກ່ຽວໂຍງ

   ຂ. ແນ່ໃຈວ່າທ່ານໄດ້ເນັ້ນໃນສິ່ງທີ່ພຣະເຈົ້າຊົງເນັ້ນ

4. ປະຍຸກ ພິຈາລະນາວ່າສິ່ງທີ່ທ່ານໄດ້ຮຽນຮູ້ທຸກຢ່າງນັ້ນມີຜົນກະທົບຕໍ່ຊີວິດຂອງທ່ານ

GCI

## 15. ຄຳອຸປະມາ

ຄືເລື່ອງລາວທີ່ສອນບົດຮຽນຈະລິຍະທຳ ຫລືຄວາມຈິງປົກກະຕິບໍ່ແມ່ນເລື່ອງຈິງແຕ່ກໍຍັງແມ່ນຄວາມຈິງ ໃນຊີວິດມີ ຈຸດມຸ້ງໝາຍເພື່ອສ້າງປະເດັນທີ່ສຳຄັນ ມັນບໍ່ໄດ້ເປັນສິ່ງທີ່ຖືກຕ້ອງທີ່ຈະລົງຄວາມເຫັນເປັນຄວາມໝາຍທາງຈິດວິນຍານ ແລະ ປະຍຸກໃນແຕ່ລະປະເດັນ

ກ. ຈຸດມຸ້ງໝາຍສອງປະການ

1. ເພື່ອເປີດເຜີຍ, ອະທິບາຍ ຫລືເນັ້ນຄວາມຈິງເພື່ອໃຫ້ຈົດຈຳ ຫລືວິທີການລົງໂທດ

2. ເພື່ອເຊື່ອງຄວາມຈິງຈາກຜູ້ທີ່ຕໍ່ຕ້ານ ມັດທາຍ 13:10–17

ຂ. ໃນການແປຄວາມໝາຍຂອງຄຳອຸປະມາທ່ານຕ້ອງ

1. ຄົ້ນພົບວ່າເປັນຫຍັງຈຶ່ງໄດ້ເຫລົ່າ ແລະບອກອັນໃດ

2. ເບິ່ງຫາຄວາມໝາຍທີ່ຕັ້ງໃຈໄວ້ໃນຄຳອຸປະມາ

ກ. ບາງຄັ້ງກໍຕ້ອງກຳນົດ

ຂ. ຖ້າບໍ່ກຳນົດ ກໍຈະຖືກສະແດງໂດຍໃຊ້ສະຕິປັນຍາ

ຄ. ຄວາມໝາຍບໍ່ໄດ້ກຳນົດໃຫ້ມີເກີນເລີຍໄປໃນສິ່ງທີ່ກຳນົດໄວ້ແນ່ຊັດ ຫລືປະຍຸກໄປຍັງຜູ້ຟັງໂດຍຜູ້ແຕ່ງ

ງ. ສະແດງຫົວຂໍ້ສຳຄັນຫລືບ່ອນເນັ້ນ

3. ມີສ່ວນຮ່ວມສຳພັນກັບລາຍລະອຽດ – ຈະເສີມໃນຫົວຂໍ້ຫລັກສະເໝີ ມາລະໂກ 4:13

4. ມີສ່ວນຮ່ວມສຳພັນກັບລາຍລະອຽດ – ລາຍລະອຽດທຸກຢ່າງໃນຄຳອຸປະມາບໍ່ມີເນື້ອໃນສຳຄັນ ແລະກ່ຽວພັນກັບຄວາມໝາຍທີ່ບໍ່ຢູ່ໃນປະເດັນໃນການເນັ້ນທີ່ບໍ່ຖືກຕ້ອງ

ຕົວຢ່າງ: ເຊັ່ນລູກຊາຍທີ່ໃຊ້ຈ່າຍສຸລຸຍສຸລ່າຍມັກຈະໃຊ້ຈ່າຍໂດຍບໍ່ລະມັດລະວັງ ເປັນເລື່ອງທີ່ສະແດງໃຫ້ຟາລີສີ ໄດ້ເຫັນເຖິງ ຫົວໃຈຂອງພະບິດາໃນການຍົກໂທດຄວາມບາບຕໍ່ຄວາມຈົ່ມຂອງພວກເຂົາຄືກັບອ້າຍຂອງຊາຍຄົນນີ້ ລູກາ 15:2

ຄຳອຸປະມາທີ່ມີຫົວຂໍ້ໃນການອົບຮົມຕ້ອງໄດ້ຮັບການຕີຄວາມໝາຍໃນການອົບຮົມດ້ານພະຄຳພີຫລາຍກວ່າການອົບຮົມຂອງເຮົາເອງ
ຕົວຢ່າງ: ເຊັ່ນ ຍິງໂງ່ ແລະຍິງສະຫລາດ ມັດທາຍ 2:13

ຄຳອຸປະມາບໍ່ຄວນສ້າງເປັນຫລັກຄຳສອນພື້ນຖານ

GCI

## 16. ນິທານປຽບທຽບ

ເປັນເລື່ອງທີ່ມີຄວາມໝາຍແຕກຕ່າງຈາກຄວາມໝາຍທີ່ຢູ່ເບື້ອງໜ້າຂອງມັນ

ຕົວຢ່າງໂຢຮັນ 10 ແລະ 15

*ໂຢຮັນ 10:7*
***ເຮົານີ້ແຫລະ, ເປັນປະຕູ***

*ໂຢຮັນ 10:11*
*ເຮົານີ້ແຫລະ, ເປັນຜູ້ລ້ຽງແກະທີ່ດີ*

*ໂຢຮັນ 15:1-5*
*1 "ເຮົາເປັນເຄືອອະງຸ່ນອັນແທ້ຈິງ ພຣະບິດາຂອງເຮົາຊຶ່ງເປັນຜູ້ບົວລະບັດ. 2 ກິ່ງທຸກກິ່ງໃນເຮົາທີ່ບໍ່ເກີດຜົນ ພຣະອົງຊົງລິເສຍ ແລະກິ່ງທຸກກິ່ງທີ່ເກີດຜົນ ພຣະອົງຊົງຕອນເພື່ອໃຫ້ເກີດຜົນຫລາຍຂຶ້ນ. 3 ບັດນີ້ທ່ານທັງຫລາຍກໍຕອນກ ແລ້ວດ້ວຍພຣະທຳທີ່ເຮົາໄດ້ກ່າວຕໍ່ພວກທ່ານ. 4 ຈົ່ງເຂົາສະໜິດຢູ່ໃນເຮົາແລະເຮົາເຂົາສະໜິດຢູ່ໃນພວກທ່ານ ກິ່ງຈະເກີດຜົນເອງບໍ່ໄດ້ນອກຈາກຈະຕິດຢູ່ກັບເຄືອສັນໃດ ທ່ານທັງຫລາຍກໍຈະເກີດຜົນບໍ່ໄດ້ນອກຈາກຈະເຂົາສະໜິດຢູ່ໃນເຮົາສັນນັ້ນ.*

*5 ເຮົາເປັນເຄືອອະງຸ່ນ ທ່ານທັງຫລາຍເປັນກິ່ງ ຜູ້ທີ່ເຂົາສະໜິດຢູ່ໃນເຮົາ ແລະເຮົາເຂົາສະໜິດຢູ່ໃນຜູ້ນັ້ນ ແມ່ນຜູ້ນັ້ນແຫລະ, ຈະເກີດຜົນຫລາຍ ເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້.*

ກ. ສາມາດມີປະເດັນສຳຄັນຫລາຍກວ່ານຶ່ງ

ຂ. ສາມາດສອນຄວາມຈິງໄດ້ມາກມາຍ

ຄ. ລາຍລະອຽດຂອງນິທານປຽບທຽບອາດມີຫລວງຫລາຍ ແລະສຳພັນຫລາຍກວ່ານຶ່ງຫົວຂໍ້

ງ. ສາມາດມີລາຍລະອຽດທີ່ບໍ່ຕົງປະເດັນ - ລັກສະນະເດ່ນຂອງນິທານປຽບທຽບທັງສິ້ນບໍ່ຕ້ອງມີການສະແດງສາມາດພັນລະນາເລື່ອງລາວ ແລະຄວາມໝາຍເຂົ້າດ້ວຍກັນ

ຈ. ການປະຍຸກໃຊ້ພົບໄດ້ໃນນິທານປຽບທຽບ

<u>ໜັງສືອ້າງອີງ</u>:

Talen from: *How to Study Your Bible Precept Upon Precept*